**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ຫ້ອງການ

ເລກທີ 497/ຫກ

ນະຄອນຫຼວງວຽງຈັນ,ວັນທີ 06/10/2023

# ໜັງສືແຈ້ງເຊີນປະມູນ

**ໂຄງການຟື້ນຟູທາງດິນແດງເປັນທາງປູຢາງ 2 ຊັ້ນ ແຕ່ແຍກທາງ 13 ເໜືອເຊື່ອມເສັ້ນທາງຫາແຫຼ່ງທ່ອງທ່ຽວຖ້ຳນອນ (ທ່າເຮືອ) ບ້ານຫ້ວຍສະເຫຼົ້າ, ເມືອງວັງວຽງ ແຂວງວຽງຈັນ**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 857/ຖວທ, ລົງວັນທີ 26 ກັນຍາ 2023;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບໂຄງການຟື້ນຟູທາງດິນແດງເປັນທາງປູຢາງ 2 ຊັ້ນ ແຕ່ແຍກທາງ13 ເໜືອເຊື່ອມເສັ້ນທາງຫາແຫຼ່ງທ່ອງທ່ຽວຖ້ຳນອນ(ທ່າເຮືອ)ບ້ານຫ້ວຍສະເຫຼົ້າ, ເມືອງວັງວຽງແຂວງວຽງຈັນ ສະບັບເລກທີ 930/ຖວທ, ລົງວັນທີ 05 ກັນຍາ 2023;
- ອີງຕາມ ແຈ້ງການ ການຈັດຕັ້ງຜັນຂະຫຍາຍ ການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການນຳໃຊ້ທຶນຮ່ອງເງິນເກີນແຜນປີ 2022 ສະບັບເລກທີ 1479/ຫສນຍ, ລົງວັນທີ 15 ສິງຫາ 2023.

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ຮັບອະນຸມັດງົບປະມານບ້ວງລາຍຈ່າຍເງິນ ບຳເນັດເກັບລາຍຮັບເກີນແຜນປີ 2022 ໂຄງການຟື້ນຟູທາງດິນແດງເປັນທາງປູຢາງ 2 ຊັ້ນແຕ່ແຍກທາງ 13 ເໜືອເຊື່ອມເສັ້ນທາງຫາແຫຼ່ງທ່ອງທ່ຽວຖ້ຳນອນ(ທ່າເຮືອ)ບ້ານຫ້ວຍສະເຫຼົ້າ, ເມືອງວັງວຽງແຂວງວຽງຈັນ. ສຳລັບໄລຍະເວລາຂອງການຟື້ນຟູທາງດິນແດງເປັນທາງປູຢາງ 2 ຊັ້ນທັງໝົດ ແມ່ນບໍ່ໃຫ້ກາຍ 05 ເດືອນນັບຕັ້ງແຕ່ມື້ລົງມືຈັດຕັ້ງປະຕິບັດຈົນເຖິງມື້ມອບ - ຮັບໂຄງການ;
2. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂໍເຊີນບັນດາ ບໍລິສັດ ທີ່ມີຄວາມສົນໃຈ ແລະ ມີຄຸນນະວຸທິເໝາະສົມເຂົ້າຍື່ນຊອງປະມູນໂຄງການຟື້ນຟູທາງດິນແດງເປັນທາງປູຢາງ 2 ຊັ້ນແຕ່ແຍກທາງ 13 ເໜືອເຊື່ອມເສັ້ນທາງຫາແຫຼ່ງທ່ອງທ່ຽວຖ້ຳນອນ (ທ່າເຮືອ) ບ້ານຫ້ວຍສະເຫຼົ້າ, ເມືອງວັງວຽງແຂວງວຽງຈັນ;
3. ໃນການປະມູນແມ່ນຈະດຳເນີນການປະມູນຮູບແບບເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
4. ການປະມູນແມ່ນອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸທິເໝາະສົມ, ມີໃບທະບຽນວິສາຫະກິດ, ທີ່ຖືກຕ້ອງຕາມກົດໝາຍ (ສຳເນົາດ້ານຫຼັງມາພ້ອມ) ແລະ ມີໃບອະນຸຍາດດຳເນີນທຸລະກິດ ທາງດ້ານການກໍ່ສ້າງ ແລະ ສ້ອມແປງຂົວ-ທາງປະຈຳປີ 2023 ໃນຂອບເຂດທົ່ວປະເທດ;

5. ທຸກໆ ບໍລິສັດ ຕ້ອງປະກອບບົດບັນທຶກການກວດກາບັນຊີແບບຄົບຊຸດປະຈໍາປີ 2022 ອອກໂດຍກົມສ່ວຍສາອາກອນ 2023 (ຍົກເວັ້ນບໍລິສັດເປີດໃໝ່) ແລະ ການເຄື່ອນໄຫວບັນຊີສໍາຮອງ ບໍລິສັດ ໄລຍະ 03 ເດືອນຜ່ານມາວົງເງິນບໍ່ຫຼຸດ 3.000.000.000 ກີບ ຂຽນເປັນໂຕໜັງສື (ສາມຕື້ກີບ) ແລະ ບັນຊີສໍາຮອງບໍ່ໃຫ້ກາຍ 01 ອາທິດກ່ອນມື້ເປີດຊອງປະມູນ;
6. ບໍລິສັດ ທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນຊື້ຊອງປະມູນໄດ້ນໍາຄະນະຮັບຜິດຊອບໂຄງການຢູ່ທີ່ ພະແນກແຜນການ ແລະ ການລົງທຶນ, ກົມແຜນການ ແລະ ການຮ່ວມມືສາກົນ, ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ສອບຖາມຂໍ້ມູນໂທ: 021 212898; 020 2223 9394 ນາງ ຄໍາບາງ ສຸລິມາບຸນເລີດ. ການຂາຍຊອງປະມູນເລີ່ມແຕ່ ວັນທີ 09 ຕຸລາ 2023 (ຕາມໂມງລັດຖະການ) ໃນລາຄາ 3.000.000 ກີບ/ຊອງ, ຈໍານວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
7. ທຸກໆ ຊອງປະມູນຕ້ອງໄດ້ປະກອບການຄໍ້າປະກັນການປະມູນດ້ວຍ ເງິນສົດ, ແຊັກ(ວີຊ້າ) ຫລື ໜັງສືຄໍ້າປະກັນການປະມູນຈາກທະນາຄານບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ແລະ ໃສ່ມາພ້ອມຊອງປະມູນ;
8. ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ 30 ຕຸລາ 2023 ທີ່ຫ້ອງປະຊຸມຊັ້ນ 01 ຂອງຕຶກກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ຖະໜົນເສດຖາທິລາດເລກທີ 01000, ຕູ້.ປນ.122 ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ທຸກຊອງປະມູນຈະໄດ້ເປີດໃນເວລາ 14:00 ໂມງຂອງວັນທີ 30 ຕຸລາ 2023 ທີ່ຫ້ອງປະຊຸມຊັ້ນ 01 ຂອງຕຶກກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ໂດຍຊ່ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງ ບໍລິສັດ ເຂົ້າຮ່ວມ.

**ຫົວໜ້າຫ້ອງການ**

ບົວໄລ ພານຸວົງ